ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສຳນັກງານນາຍົກລັດຖະມົນຕີ

ເລກທີ 24/ ນຍ

ນະຄອນຫລວງວຽງຈັນ, ວັນທີ 01 ກັນຍາ 2005

# ຄຳສັ່ງ

## ຂອງນາຍົກລັດຖະມົນຕີ

## ກ່ຽວກັບການໃຫ້ບູລິມະສິດອັດຕາພາສີຂາເຂົ້າຊຶ່ງກັນ ແລະ ກັນ ສຳລັບສິນຄ້າ ຂອງ ສປປ ລາວ ແລະ ສສ ຫວຽດນາມ

ເຖິງ : ບັນດາທ່ານລັດຖະມົນຕີວ່າການກະຊວງ, ຫົວໜ້າອົງການທຽບເທົ່າ, ບັນດາທ່ານເຈົ້າແຂວງ, ເຈົ້ານະຄອນຫລວງ ແລະ ຫົວໜ້າເຂດພິເສດ ໃນທົ່ວປະເທດ.

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ.
- ອີງຕາມສັນຍາວ່າດ້ວຍການຮ່ວມມືດ້ານເສດຖະກິດ, ວັດທະນະທຳ, ວິທະຍາສາດ ແລະ ເຕັກນິກ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສສ ຫວຽດນາມ ຊຶ່ງໄດ້ລົງນາມຮ່ວມກັນ ໃນວັນທີ 07/01/2005.
- ເຫັນຕາມການຕົກລົງລະຫວ່າງ ກະຊວງການຄ້າ ແຫ່ງ ສປປ ລາວ ແລະ ກະຊວງການຄ້າ ແຫ່ງ ສສ ຫວຽດນາມ ວ່າດ້ວຍການໃຫ້ບູລິມະສິດອັດຕາພາສີຂາເຂົ້າຊຶ່ງກັນ ແລະ ກັນ ສຳລັບສິນຄ້າຂອງ ສປປ ລາວ ແລະ ສສ ຫວຽດນາມ ສະບັບລົງວັນທີ 28/07/2005.

### ນາຍົກລັດຖະມົນຕີອອກຄຳສັ່ງ:

1. ໃຫ້ກະຊວງການເງິນເປັນຕົ້ນອອກແນະນຳ ກ່ຽວກັບການຈັດຕັ້ງປະຕິບັດການໃຫ້ບູລິມະສິດອັດຕາພາສີຂາເຂົ້າຊຶ່ງກັນ ແລະ ກັນ ສຳລັບສິນຄ້າຂອງ ສປປ ລາວ ແລະ ສສ ຫວຽດນາມ ໃຫ້ເຈົ້າໜ້າທີ່ພາສີປະຈຳບັນດາດ່ານ ເພື່ອຈັດຕັ້ງປະຕິບັດຢ່າງເຂັ້ມງວດ ການເກັບອັດຕາພາສີຂາເຂົ້າເທົ່າກັບ 0%, ການເກັບອັດຕາພາສີຂາເຂົ້າເທົ່າກັບ 50% ແລະ ການເກັບອັດຕາພາສີຂາເຂົ້າຕໍ່ກັບບັນຊີສິນຄ້າທີ່ບໍ່ໄດ້ຮັບບູລິມະສິດຕາມທີ່ໄດ້ຄັດຕິດນຳຂໍ້ຕົກລົງ ລະຫວ່າງກະຊວງການຄ້າ ແຫ່ງ ສປປ ລາວ ແລະ ກະຊວງການຄ້າ ແຫ່ງ ສສ ຫວຽດນາມ ວ່າດ້ວຍການໃຫ້ບູລິມະສິດອັດຕາພາສີຂາເຂົ້າຊຶ່ງກັນ ແລະ ກັນ ສຳລັບສິນຄ້າຂອງ ສປປ ລາວ ແລະ ສສ ຫວຽດນາມ ສະບັບລົງວັນທີ ທີ່ໄດ້ລົງລາຍເຊັນໃນວັນທີ 28/07/2005 (ຄັດຕິດກັບຄຳສັ່ງສະບັບນີ້).

2. ໃຫ້ກະຊວງການຄ້າເປັນຜູ້ອອກລະບຽບການນຳໃຊ້ Form S ແລະ ຈັດຕັ້ງການໂຄສະນາເຜີຍແຜ່ ກ່ຽວກັບການໃຫ້ບູລິມະສິດອັດຕາພາສີຂາເຂົ້າຊຶ່ງກັນ ແລະ ກັນ ສຳລັບສິນຄ້າຂອງ ສປປ ລາວ ແລະ ສສ ຫວຽດນາມ ໃຫ້ແກ່ບັນດາອົງການຂອງລັດ ແລະ ຫົວໜ່ວຍທຸລະກິດ ໃນທົ່ວປະເທດ ເພື່ອອຳນວຍຄວາມສະດວກໃຫ້ແກ່ການນຳໃຊ້ບູລິມະສິດດັ່ງກ່າວ. ພ້ອມກັນນັ້ນ, ກໍໃຫ້ຕິດຕາມການ ຈັດຕັ້ງປະຕິບັດການໃຫ້ບູລິມະສິດອັດຕາພາສີຂາເຂົ້າຊຶ່ງກັນ ແລະ ກັນ, ປະສານກັບຝ່າຍຫວຽດ ນາມ ແລະ ແກ້ໄຂຢ່າງທັນການ ເມື່ອມີບັນຫາຂໍ້ຂ້ອງຄາເກີດຂຶ້ນ.

3. ບັນດາກະຊວງ, ອົງການທຽບເທົ່າ, ບັນດາແຂວງ, ນະຄອນຫລວງ ແລະ ເຂດພິເສດ ຈົ່ງຮັບຊາບ ແລະ ເປັນເຈົ້າການໃນການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ.

4. ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ເຊັນ ແລະ ປະທັບຕາ

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ບຸນຍັງ ວໍລະຈິດ

---

ສຳເນົາຖືກຕ້ອງຕາມສະບັບເດີມ

ຊາອອກເລກທີ:

ນະຄອນຫລວງວຽງຈັນ, ວັນທີ:

ຮັກສາການຫົວໜ້າຫ້ອງການກະຊວງການຄ້າ

ລືມຫວັງ ມີນທະວົງ